ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ຄະນະຮັບຜິດຊອບໂຄງການ

ຫ້ອງການ

ເລກທີ 647/ຫກ

ນະຄອນຫຼວງວຽງຈັນ, ວັນທີ 30 ພະຈິກ 2023

# ແຈ້ງການ

**ເລື່ອງ: ການຮັບຮອງເອົາ ບໍລິສັດ ທີ່ຊະນະ ແລະ ບໍ່ຊະນະການປະມູນ**

- ອີງຕາມ ຂໍ້ຕົກລົງວ່າດ້ວຍການແຕ່ງຕັ້ງຄະນະຮັບຜິດຊອບໂຄງການຈັດຊື້-ຈັດຈ້າງອຸປະກອນທາງດ້ານ ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 900/ຖວທ, ລົງວັນທີ 28 ກັນຍາ 2023;
- ອີງຕາມ ຂໍ້ຕົກລົງ ວ່າດ້ວຍການຮັບຮອງເອົາ ບໍລິສັດ ສາມເອສ໌ ພັດທະນາ ຈຳກັດ ເປັນຜູ້ຈັດຊື້ອຸປະກອນທາງດ້ານ ກະຊວງຖະແຫຼງຂ່າວ,ວັດທະນະທຳແລະ ທ່ອງທ່ຽວສະບັບເລກທີ 1241/ຖວທ, ລົງວັນທີ 29 ພະຈິກ 2023;
- ອີງຕາມ ບົດປະເມີນຜົນການປະມູນ ສະບັບເລກທີ 583/ຫກ, ລົງວັນທີ 28 ພະຈິກ 2023.

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວໃນນາມເຈົ້າຂອງໂຄງການ ຂໍແຈ້ງມາຍັງທ່ານ ເພື່ອຊາບກ່ຽວກັບຜົນຂອງການປະມູນ *“ ໂຄງການຈັດຊື້ອຸປະກອນທາງດ້ານ ກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ”* ເຊິ່ງການປະມູນແຂ່ງຂັນ ລາຄາຄັດເລືອກຜູ້ຊະນະ ໄດ້ເປີດຂຶ້ນໃນວັນທີ 28 ພະຈິກ 2023 ທີ່ຜ່ານມາຢູ່ທີ່ຫ້ອງປະຊຸມຊັ້ນ 02 ຂອງຕຶກກະຊວງ ຖວທ, ຖະໜົນເສດຖາທິລາດເລກທີ 01000, ຕູ້.ປນ.122 ບ້ານຊຽງຍືນ, ເມືອງຈັນທະບູລີ, ນະຄອນ ຫຼວງວຽງຈັນລາຍລະອຽດມີດັ່ງນີ້:

ໂຄງການ: ຈັດຊື້ອຸປະກອນທາງດ້ານກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ

**ຜູ້ຊະນະການປະມູນ**

| ລ/ດ | ຊື່ບໍລິສັດ/ຜູ້ປະມູນ | ລາຄາມື້ເປີດຊອງ | ລາຄາປະເມີນ | ຜົນການປະເມີນ |
|---|---|---|---|---|
| 1 | ບໍລິສັດ ສາມເອສ໌ ພັດທະນາ ຈຳກັດ | 1.399. 346.000 | 1.399. 346.000 | ຜ່ານ |

**ຜູ້ປະມູນອື່ນໆ**

| ລ/ດ | ຊື່ບໍລິສັດ/ຜູ້ປະມູນ | ລາຄາມື້ເປີດຊອງ | ລາຄາປະເມີນ | ຜົນການປະເມີນ | ເຫດຜົນທີ່ບໍ່ຊະນະ |
|---|---|---|---|---|---|
| 1 | ວິສະຫະກິດ ສ່ວນບຸກຄົນ ຮ້ານເອັນເອັນດີ | 1.499.048.600 | 1.499.048.600 | ບໍ່ຜ່ານ | - ເອກະສານປະມູນມີບໍ່ຄົບຖ້ວນ;<br>- ລາຄາສູງກ່ອນບໍລິສັດທີ່ຊະນະ |

| | | | | | |
|---|---|---|---|---|---|
| 2 | ບໍລິສັດ ລາຊາໂຊກ ຈຳກັດຜູ້ດຽວ | 1.490.001.750 | 1.490.001.750 | ບໍ່ຜ່ານ | - ເອກະສານປະມູນມີບໍ່ຄົບຖ້ວນ;<br>- ລາຄາສູງກ່ອນບໍລິສັດທີ່ຊະນະ |
| 3 | ບໍລິສັດ ຊີເອັດ ອິນເທເລັກ(ລາວ) ຈຳຈັດ | 1.436.120.830 | 1.436.120.830 | ບໍ່ຜ່ານ | - ເອກະສານປະມູນມີບໍ່ຄົບຖ້ວນ;<br>- ລາຄາສູງກ່ອນບໍລິສັດທີ່ຊະນະ |
| 4 | ບໍລິສັດ ໄອເຊັນເຕີ້ ຈຳກັດ | 1.099.746.000 | 1.099.746.000 | ບໍ່ຜ່ານ | - ເອກະສານປະມູນມີບໍ່ຄົບຖ້ວນ; |

ຄະນະຮັບຜິດຊອບໂຄງການ ຈັດຊື້ອຸປະກອນທາງດ້ານ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຂໍຂອບໃຈມາຍັງບັນດາ ບໍລິສັດ ທີ່ໃຫ້ຄວາມສົນໃຈເຂົ້າຮ່ວມການປະມູນໃນຄັ້ງນີ້ ແລະ ຫວັງຢ່າງຍິ່ງວ່າການປະມູນຄັ້ງຕໍ່ໄປພວກ ທ່ານ ຈະໃຫ້ຄວາມສົນໃຈເຂົ້າຮ່ວມອີກ. ສຳລັບຜູ້ຊະນະການປະມູນຕ້ອງໄດ້ເຂົ້າມາເຊັນ ສັນຍາພາຍໃນ 14 ວັນຕາມກຳນົດເວລາ.

ຖ້າວ່າ ທ່ານໃດ ຫຼື ບໍລິສັດໃດ ທີ່ເຂົ້າຮ່ວມປະມູນຄັ້ງນີ້ ມີຂໍ້ຂ້ອງໃຈ ຫຼື ຄິດວ່າບໍ່ໄດ້ຮັບຄວາມເປັນທຳຕໍ່ກັບຜົນການປະເມີນ ແລະ ການຕັດສິນຂ້າງເທິງນີ້ ສາມາດເຮັດໜັງສືເປັນທາງການຫາ ຄະນະຮັບຜິດຊອບໂຄງການຈັດຊື້ອຸປະກອນທາງດ້ານ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ( ຫ້ອງການກະຊວງ )ພາຍໃນ 14 ວັນ, ການຮ້ອງທຸກແມ່ນປະຕິບັດຕາມຂັ້ນຕອນທີ່ກຳນົດໄວ້ໃນຄຳແນະນຳການປະຕິບັດກົດໝາຍຈັດຊື້-ຈັດຈ້າງ, ຖ້າການຮ້ອງທຸກກາຍເວລາທີ່ກຳນົດໄວ້ຖືວ່າບໍ່ມີຜົນ ຫຼື ບໍ່ໄດ້ຮັບການພິຈາລະນາ.

ໜັງສືຮ້ອງຮຽນສາມາດ ສົ່ງຫາຄະນະຮັບຜິດຊອບໂຄງການ ຈັດຊື້ອຸປະກອນທາງດ້ານ ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ:

- **ຫ້ອງການ;**

1. ທ່ານ ບົວໄລ ພານຸວົງ ຫົວໜ້າຫ້ອງການ;
   ເບີໂທລະສັບ: 020 5669 6161.
2. ທ່ານ ນາງ ສຸດທິສາ ຈູມມະລີ ວິຊາການ ພະແນກບໍລິຫານ ແລະ ຄຸ້ມຄອງຊັບສິນ
   ເບີໂທລະສັບ: 021 212405, 020 5625 5252;

ດັ່ງນັ້ນ, ຈຶ່ງຂໍແຈ້ງມາຍັງທ່ານ ຜູ້ອຳນວຍການ ບໍລິສັດ ເພື່ອຮັບຊາບ ແລະ ປະຕິບັດຕາມແຈ້ງການສະບັບນີ້ດ້ວຍ.

ເຊັນແທນຫົວໜ້າຄະນະຮັບຜິດຊອບໂຄງການ
(ຫົວໜ້າຫ້ອງການ)

ຫ້ອງການ

ບົວໄລ ພານຸວົງ